ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ...010.....⁄ ນຍ

ນະຄອນຫລວງວຽງຈັນ, ວັນທີ 02/06/2011

ຄຳສັ່ງແນະນຳ

ຂອງນາຍົກລັດຖະມົນຕີ

ກ່ຽວກັບການຕ້ານ ແລະ ສະກັດກັ້ນ ການຂຸດຄົ້ນ ແລະ

ຊື້-ຂາຍໄມ້ ປະເພດຫວງຫ້າມ.

ເຖິງ : ບັນດາລັດຖະມົນຕີວ່າການ, ຫົວໜ້າອົງການລັດຖະບານ, ເຈົ້າຄອງນະຄອນຫລວງວຽງຈັນ ແລະ ບັນດາເຈົ້າແຂວງ ໃນທົ່ວປະເທດ. ,

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ເລກທີ 17/ນຍ, ລົງວັນທີ 22/9/2008.

- ອີງຕາມການຊີ້ນຳ ແລະ ຕົກລົງ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 24/5/2011 ກ່ຽວກັບການແກ້ໄຂສະພາບການຊື້-ຂາຍໄມ້ປະເພດຫວງຫ້າມ.

ໃນສະພາບປະຈຸບັນເຫັນວ່າ ຢູ່ຫລາຍທ້ອງຖິ່ນຍັງມີພວກພໍ່ຄ້າຊາວຂາຍ ທັງພາຍໃນ ແລະ ຕ່າງປະເທດ ໄດ້ສົມຮູ້ຮ່ວມຄິດກັບພວກຄົນບໍ່ດີ, ລວມທັງເຈົ້າໜ້າທີ່ ແລະ ປະຊາຊົນຈຳນວນໜຶ່ງ ລັກລອບ, ເກັບກູ້, ຕັດໄມ້ ແລະ ສົ່ງໄມ້ ປະເພດຫວງຫ້າມ ເປັນຕົ້ນແມ່ນໄມ້ຂະຍຸງອອກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ, ເຊິ່ງເປັນການລະເມີດຕໍ່ຄຳສັ່ງ ເລກທີ 17/ນຍ, ລົງວັນທີ

22/09/2008 ກໍ່ຄືກົດໝາຍວ່າດ້ວຍປ່າໄມ້. ລັດຖະບານເຫັນວ່າບັນຫາດັ່ງກ່າວ ເປັນບັນຫາອັນຮີບດ່ວນ ຂອງທຸກຂະແໜງການ ແລະ ທ້ອງຖິ່ນ ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂຢ່າງເດັດຂາດ ແລະ ເຂັ້ມງວດ.

ເພື່ອໃຫ້ບັນດາກະຊວງ ແລະ ອົງການກ່ຽວຂ້ອງຂອງລັດຖະບານ ກໍຄືອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ ໄດ້ຈັດຕັ້ງ ແລະ ຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 17/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງໄມ້ ແລະ ທຸລະກິດໄມ້ໄດ້ຖືກຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃຫ້ມີຄວາມສັກສິດ ແລະ ມີປະສິດທິພາບ.

ນາຍົກລັດຖະມົນຕີ ອອກຄຳສັ່ງແນະນຳ :

1)- ທຸກໆແຂວງໃນທົ່ວປະເທດ ຕ້ອງຢຸດຕິການລັກລອບ ຂຸດຄົ້ນ, ເກັບກູ້, ທ້ອນໂຮມ ແລະ ຂາຍໄມ້ຫວງຫ້າມ, ເປັນຕົ້ນໄມ້ຂະຍຸງອອກຕ່າງປະເທດ ຢ່າງເດັດຂາດ, ພ້ອມກັນນັ້ນ ກໍ່ໃຫ້ບັນດາກະຊວງ, ອົງການລັດຖະບານ, ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 17/ນຍ, ລົງວັນທີ 22/09/2008 ແລະ ກົດໝາຍປ່າໄມ້ ຢ່າງເຂັ້ມງວດ.

2)- ໃຫ້ບັນດາແຂວງ ຈັດຕັ້ງຄະນະໜຶ່ງຂຶ້ນ ສົມທົບກັບໜ່ວຍກໍ່ສ້າງຮາກຖານການເມືອງ ເພື່ອສຶກສາອົບຮົມແນວຄິດໃຫ້ປະຊາຊົນ, ພະນັກງານ, ທະຫານ, ຕຳຫລວດ, ຜູ້ປະກອບການທຸລະກິດໄມ້ ໃຫ້ເຂົ້າໃຈຢ່າງຖືກຕ້ອງ ຕໍ່ນະໂຍບາຍຂອງລັດຖະບານ ກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້, ພ້ອມກັນເປັນເຈົ້າການໃນການປົກປັກຮັກສາຊັບພະຍາກອນປ່າໄມ້ ໃຫ້ຄົງໄວ້ຢ່າງຍືນນານ.

- ເປົ້າໝາຍ ແລະ ພື້ນທີ່ຕ້ອງໄດ້ເອົາໃຈໃສ່ດ່ວນ ແມ່ນເຂດຫລໍ່ແຫລມຕາມຊາຍແດນໄທ-ລາວ, ລາວ-ຫວຽດນາມ ໂດຍສະເພາະແມ່ນບັນດາແຂວງພາກກາງ ແລະ ພາກໃຕ້ ເດັ່ນກວ່າໝູ່ແມ່ນຢູ່ເຂດເມືອງຄຳເກີດ ແຂວງບໍລິຄຳໄຊ, ແຂວງຄຳມ່ວນ, ແຂວງສະຫວັນນະເຂດ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື.

3)- ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບເຈົ້າໜ້າທີ່ ປກຊ-ປກສ ເອົາໃຈໃສ່ກວດກາໄມ້ຕາມເສັ້ນທາງຕ່າງໆ, ເຊັ່ນ: ເສັ້ນທາງເລກທີ 8,9,12,15,18, ຊາຍແດນ ລາວ-ຈີນ ແລະ ຈຸດອື່ນໆ ທີ່ມີການລັກລອບຊຸກເຊື່ອງຂົນຍ້າຍປະເພດໄມ້ດັ່ງກ່າວ. ຈຸດໜັກແມ່ນເສັ້ນທາງເຂົ້າສູ່ດ່ານນ້ຳພ້າວ, ເກົ່າແຈ້ວ ຂອງເມືອງຄຳເກີດ ແຂວງບໍລິຄຳໄຊ, ເມື່ອມີການກວດພົບເຈົ້າໜ້າທີ່ກ່ຽວຂ້ອງ ມີສິດກັກ ຍຶດ ແລະ ໃຫ້ເຈົ້າໜ້າທີ່ປ່າໄມ້ ດຳເນີນຄະດີຕາມກົດໝາຍປ່າໄມ້ ຢ່າງເຂັ້ມງວດ.

- ໃຫ້ເອົາໃຈໃສ່ຕິດຕາມກວດກາ ການສົ່ງອອກສິນຄ້າຕ່າງໆ ຢູ່ບັນດາດ່ານເຂົ້າ-ອອກ ຢ່າງເຂັ້ມງວດ ທັງນີ້ກໍ່ເພື່ອຫລີກເວັ້ນການຊຸກເຊື່ອງໄມ້ຜິດກົດໝາຍ ອອກຕ່າງປະເທດ.

4)- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສືບຕໍ່ປັບປຸງໂຮງງານປຸງແຕ່ງໄມ້ ເພື່ອຮອງຮັບການປຸງແຕ່ງໄມ້ ເປັນຜະລິດຕະພັນສຳເລັດຮູບ ຕາມນະໂຍບາຍຂອງລັດຖະບານ.

5)- ໄມ້ທີ່ບັນດາແຂວງຍຶດໄວ້ນັ້ນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ປະສານສົມທົບກັນ ເພື່ອທ້ອນໂຮມ ແລະ ເກັບມ້ຽນໄວ້ຕາມສະຖານທີ່ ທີ່ເໝາະສົມ ເພື່ອຫລີກເວັ້ນການຕົກເຮັ່ຍເສຍຫາຍ. ຈາກນັ້ນ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ເກັບຊື້ ແລະ ຂາຍໃຫ້ບັນດາໂຮງງານປຸງແຕ່ງພາຍໃນ ທີ່ໄດ້ມາດຕະຖານ.

6)- ໃຫ້ກະຊວງການເງິນ ພິຈາລະນາງົບປະມານຈຳນວນໜຶ່ງ ເພື່ອທັນເອົາພະນັກງານ ຂອງກະຊວງກ່ຽວຂ້ອງ ລົງເຮັດວຽກນີ້ສະເພາະ, ຖືເປັນວຽກສຸກເສີນ ແລະ ຮີບດ່ວນ, ກ່ອນອື່ນໝົດແມ່ນໃນເຂດເມືອງຄຳເກີດ ແຂວງບໍລິຄຳໄຊ.

7)- ມອບໃຫ້ອົງການກວດກາລັດຖະບານ ແລະ ຄະນະເລຂາທິການລັດຖະບານ ເປັນຜູ້ຕິດຕາມກວດກາຢ່າງໃກ້ຊິດ ໃນການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ແລະ ລາຍງານເປັນປະຈຳ ໃຫ້ລັດຖະບານ.

8)- ໃຫ້ບັນດາລັດຖະມົນຕີ, ຫົວໜ້າອົງການລັດຖະບານ, ເຈົ້າຄອງນະຄອນຫລວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ທົ່ວເຖິງ.

9)- ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ທອງສິງ ທຳມະວົງ